ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 1575 - - - /ກຂອ.ບຂອ

ນະຄອນຫຼວງວຽງຈັນ, ວັນທີ 30 ເມສາ 2021

# ແຈ້ງການ

ເຖິງ: - ກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ;
- ກົມພາສີ, ກະຊວງການເງິນ;
- ບັນດາອົງການຈັດຕັ້ງຂອງ ລັດ ແລະ ເອກະຊົນ.

ເລື່ອງ: ການຢຸດຕິການຈ້ຳກາແດງໃສ່ສຳເນົາໃບອະນຸຍາດນຳເຂົ້າຍານພາຫະນະທີ່ອອກອະນຸຍາດແບບເຈ້ຍ ສໍ ໂດຍ ກົມການນຳເຂົ້າ ແລະ ສົ່ງອອກ.

- ອີງຕາມ ໜັງສືແຈ້ງຕອບຂອງຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 180/ຍທຂ, ລົງວັນທີ 24 ມີນາ 2021.

ເພື່ອເປັນການຫຼຸດຈຳນວນເອກະສານທີ່ບໍ່ຈຳເປັນລົງ ແລະ ປັບປຸງຂັ້ນຂອດການປະກອບເອກະສານນຳເຂົ້າ ແລະ ຂຶ້ນທະ ບຽນຍານພາຫະນະ ໃຫ້ ກະທັດຮັດ ແລະ ສອດຄ່ອງກັບພາລະບົດບາດຂອງຂະແໜງການ. ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ດັ່ງນີ້:

1. ນັບແຕ່ວັນທີ 03 ພຶດສະພາ 2021 ເປັນຕົ້ນໄປ, ກົມການນຳເຂົ້າ ແລະ ສົ່ງອອກ ຈະຢຸດຕິການຈ້ຳກາແດງໃສ່ສຳເນົາໃບອະນຸຍາດນຳເຂົ້າຍານພາຫະນະທີ່ກົມອອກຜ່ານລະບົບເຈ້ຍສໍ (ລະບົບເກົ່າ).
2. ໃຫ້ຢຸດຕິການພິມ ເລກຈັກ ແລະ ເລກຖັງ ຂອງຍານພາຫະນະໃສ່ດ້ານຫຼັງຂອງໃບອະນຸຍາດນຳເຂົ້າຍານພາຫະນະ ແລະ ໃຫ້ລະບຸຂໍ້ມູນລະອຽດຂອງພາຫະນະທີ່ຈະນຳເຂົ້າ ໄດ້ແກ່: ປະເພດ, ຍີ່ຫໍ້, ລຸ້ນ, ຈຳນວນ ແລະ ມູນຄ່າ ຂອງພາຫະນະໃສ່ດ້ານໜ້າຂອງໃບອະນຸຍາດ (ຕາມຕົວຢ່າງສັດຕິດມາພ້ອມນີ້).
3. ໃບອະນຸຍາດນຳເຂົ້າຍານພາຫະນະ ຈະມີຈ້ຳກາແດງແຕ່ 03 ສະບັບໄດ້ແກ່: 01 ສະບັບຕົ້ນ ມອບໃຫ້ຜູ້ປະກອບການ, 01 ສະບັບສຳເນົາ ເກັບຮັກສາໄວ້ນຳ ກົມການນຳເຂົ້າ ແລະ ສົ່ງອອກ ແລະ ອີກ 01 ສະບັບສຳເນົາແມ່ນນຳສົ່ງໃຫ້ ກົມຂົນສົ່ງ ໃຊ້ເປັນບ່ອນອີງອອກ ໃບອະນຸຍາດດ້ານເຕັກນິກ ນຳພາຫະນະກົນຈັກເຂົ້າ ແລະ ຂຶ້ນທະບຽນຢູ່ ສປປ ລາວ. ການປະກອບເອກະສານເພື່ອຂໍໃບອະນຸຍາດນຳແຕ່ລະຂະແໜງການ, ຜູ້ປະກອບການຕ້ອງໄດ້ຖືໃບອະນຸຍາດນຳເຂົ້າຍານພາຫະນະສະບັບຕົ້ນໄປນຳ ເພື່ອຢັ້ງຢືນໃນກໍລະນີທີ່ເຈົ້າໜ້າທີ່ຮຽກຮ້ອງຂໍກວດກາ.
4. ເອກະສານປະກອບໃນການຂໍຂຶ້ນທະບຽນນຳໃຊ້ພາຫະນະ ແມ່ນໃຫ້ອີງໃສ່ໃບອະນຸຍາດດ້ານເຕັກນິກນຳພາຫະນະກົນຈັກເຂົ້າ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ທີ່ອອກໃຫ້ໂດຍ ກົມຂົນສົ່ງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນຂໍ້ມູນປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ ກົມການນຳເຂົ້າແລະສົ່ງອອກ

ສຸລິຍົນ ພິລາວົງ